**Official inauguration of the United Nations House and Launch of the MDG Progress Report**

**Vientiane, 11 April 2009**

---

**ບົດກ່າວຄຳປາໃສຂອງ ທ່ານ ນາງ ໂຊນາມ ຢັງເຊັນ ຣານາ,**

**ຜູ້ປະສານງານອົງການສະຫະປະຊາຊາດ ປະຈຳ ສປປ ລາວ**

11 ເມສາ 2009

ຮຽນ ພະນະທ່ານ ບັນ ກີມູນ, ເລຂາທິການໃຫຍ່ອົງການສະຫະປະຊາຊາດ
ຮຽນ ພະນະທ່ານ ດຣ. ທອງລຸນ ສີສຸລິດ, ຮອງນາຍົກລັດຖະມົນຕີ ແລະ
ລັດຖະມົນຕີວ່າການ ກະຊວງການຕ່າງປະເທດ
ຮຽນ ບັນດາ ທ່ານຍິງ ແລະ ທ່ານຊາຍ

ຂ້າພະເຈົ້າດີໃຈ ແລະ ຮູ້ສຶກເປັນກຽດທີ່ໄດ້ ຮ່ວມກັບ ພະນະທ່ານ ດຣ. ທອງລຸນ ສີສຸລິດ, ຮອງນາຍົກ ລັດຖະມົນຕີ ແລະ ລັດຖະມົນຕີວ່າການກະຊວງການຕ່າງປະເທດ ໃນການກ່າວ ຕ້ອນຮັບ ທ່ານ ບັນ ກີມູນ, ເລຂາທິການໃຫຍ່ອົງການສະຫະປະຊາຊາດ ສູ່ ສປປ ລາວ ແລະ ສຳນັກ ງານຂອງອົງການສະຫະປະຊາຊາດ ໃນມື້ນີ້.

ຕາງໜ້າໃຫ້ທີມງານອົງການສະຫະປະຊາຊາດປະຈຳ ສປປ ລາວ ແລະ ໝົດທຸກທ່ານ ທີ່ມາຈາກພາກລັດ, ຈາກບັນດາອົງການຊ່ວຍເຫລືອສອງຝ່າຍ ແລະ ຫລາຍຝ່າຍ, ຈາກສະ ມາຄົມພົນລະເຮືອນ ແລະ ປະຊາຊົນລາວ ທີ່ມາຮ່ວມພິທີໃນມື້ນີ້ - ພວກເຮົາ ຂໍຮຽນ ໃຫ້ທ່ານ ຊາບ ວ່າພວກເຮົາໄດ້ລໍຄອຍມື້ນີ້ ມາເປັນເວລາດົນນານ.

ມັນເປັນເວລາເກືອບ 25 ປີແລ້ວ ນັບຕັ້ງແຕ່ໄດ້ມີການມາຢ້ຽມຢາມ ສປປ ລາວ ຄັ້ງສຸດທ້າຍ ຂອງທ່ານເລຂາທິການໃຫຍ່ອົງການສະຫະປະຊາຊາດ ເພາະສະນັ້ນ ມື້ນີ້ຈຶ່ງແມ່ນເຫດການ ປະຫວັດ ສາດອັນໜຶ່ງ. ພວກເຮົາຂໍສະແດງຄວາມ ຂອບໃຈ ຕໍ່ພະນະທ່ານ ບັນ ກີມູນ ສໍາລັບການມາ ຢ້ຽມຢາມ ພວກເຮົາໃນມື້ນີ້, ເພື່ອສະແດງໃຫ້ພວກ ເຮົາເຫັນວ່າ ການ ຢ້ຽມຢາມ ປະເທດນ້ອຍ ແລະ ມີຄວາມສະຫງົບສຸກ ຂອງທ່ານ ແມ່ນມີຄວາມໝາຍ ສໍາຄັນຫລາຍ ແລະ ພວກເຮົາຂໍສັນຍາວ່າ ການຢ້ຽມຢາມຂອງທ່ານ ຈະເປັນ ຄວາມຊົງ ຈໍາທີ່ດີ.

ພິທີໃນມື້ນີ້ແມ່ນກ່ຽວກັບການເປັນຄູ່ຮ່ວມງານ: ສິ່ງທີ່ສໍາຄັນທີ່ສຸດ ແມ່ນ ການເປັນຄູ່ຮ່ວມງານ ລະຫວ່າງລັດຖະບານ ແລະ ບັນດາເພື່ອນມິດທາງດ້ານການພັດທະນາ ທີ່ມີເປົ້າໝາຍ ອັນດຽວກັນ ນັ້ນກໍ່ຄື ການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນລາວໃຫ້ດີຂຶ້ນ.

ພວກເຮົາຂໍສະແດງຄວາມຂອບໃຈຢ່າງຈິງໃຈ ຕໍ່ລັດຖະບານ, ກະຊວງການຕ່າງປະເທດ ພາຍໃຕ້ການຊີ້ນໍານໍາພາ ຂອງ ພະນະທ່ານ ດຣ. ທອງລຸນ ສີສຸລິດ ແລະ ຕໍ່ພະນັກງານລັດ ທຸກທ່ານ ທີ່ໄດ້ຕັ້ງໜ້າປະກອບສ່ວນໃນປີທີ່ຜ່ານມາ ເພື່ອສ້າງອາຄານຫລັງນີ້ ແລະ ຈັດພິທີໃນມື້ນີ້.

ດ້ວຍການປະສົມປະສານທີ່ໂດດເດັ່ນຂອງສະຖາປັດຕະຍະກໍາລາວ ແລະ ສະຖາປັດ ຕະຍະກໍາ ທີ່ທັນສະໄໝ, ອາຄານທີ່ສວຍເດັ່ນ ແຫ່ງນີ້ສະແດງອອກເຖິງ ປະຫວັດ ສາດຂອງ ການຮ່ວມມື ແລະ ຄວາມໄວ້ວາງໃຈອັນຍາວນານ ລະຫວ່າງ ລັດຖະບານ ສປປ ລາວ ແລະ ອົງການສະຫະປະຊາຊາດ – ຄວາມສໍາພັນໄດ້ຈະເລີນເຕີບໂຕເປັນໄລຍະເວລາ ທີ່ຍາວນານ, ແລະ ບໍ່ມີຂໍ້ສົງໃສເລີຍວ່າຈະສືບຕໍ່ຂະຫຍາຍຕົວຕື່ມອີກໃນຊຸມປີຕໍ່ໜ້າ.

ສຳນັກງານຂອງອົງການສະຫະປະຊາຊາດແຫ່ງນີ້ ຈະເປັນບ້ານໃຫ້ແກ່ 09 ຫນ່ວຍງານ ຂອງ ອົງການສະຫະປະຊາຊາດ. ສະຖານ ທີ່ຕັ້ງຂອງສຳນັກງານໄດ້ນຳເອົາພວກເຮົາ ມາໄວ້ ໃກ້ກັບໃຈກາງຂອງປະຫວັດສາດ ແລະ ວັດທະນະທຳທີ່ອຸດົມຮັ່ງມີຂອງປະເທດລາວ – ເຊິ່ງມີ ທັດສະນີຍະພາບຂອງປະຕູໄຊ ແລະ ວັດທາດຝຸ່ນ – ແລະ ໃກ້ກັບຄ້ອງສັນຕິພາບໂລກ.

ບໍລິເວນຂອງອາຄານ ແມ່ນຢູ່ພາຍໃຕ້ຮົ່ມເງົາຂອງ ຕົ້ນໄມ້ທີ່ມີອາຍຸຫລາຍທີ່ສຸດ ແລະ ລ້ຳຄ່າທີ່ສຸດໃນປະເທດລາວ, ຊຶ່ງເປັນສັນຍາລັກຂອງມໍລະດົກທາງດ້ານສິ່ງແລດລ້ອມ ອັນລ້ຳຄ່າຂອງປະເທດ, ແລະ ພວກເຮົາຈະປົກປັກຮັກສາ ແລະ ດູແລໃຫ້ດີທີ່ສຸດ.

ແນ່ນອນທີ່ສຸດ ສິ່ງທີ່ເຮັດໃຫ້ພິທີໃນມື້ນີ້ມີຄວາມຫມາຍສຳຄັນຍິ່ງຂຶ້ນ ແມ່ນຍ້ອນ ການເຂົ້າ ຮ່ວມຂອງ ພະນະທ່ານເລຂາທິການໃຫຍ່ ອົງການສະຫະປະຊາຊາດ – ຜູ້ໃຫ້ການສະຫນັບ ສະຫນູນ ເປົ້າຫມາຍການພັດທະນາ ສະຫັດ ສະຫວັດ – ເພື່ອເຜີຍແຜ່ບົດລາຍງານກ່ຽວກັບ ຄວາມຄືບຫນ້າ ຂອງ ສປປ ລາວ ໃນການບັນລຸເປົ້າຫມາຍການພັດທະນາສະຫັດສະຫວັດ ພາຍໃນປີ 2015.

ທ່ານ ເລຂາທິການໃຫຍ່, ດ້ວຍເອົາໃຈໃສ່ຂອງລັດຖະບານ ສປປ ລາວ ແລະ ການໃຫ້ ຊຸກຍູ້ ແລະ ການສະຫນັບສະຫນູນຂອງທ່ານ – ຂ້າພະເຈົ້າຫວັງວ່າພວກເຮົາຈະສາມາດ ກ້າວໄປຫນ້າຢ່າງໄວວາ ພ້ອມກັບບັນດາຂໍ້ແນະນຳໄປສູ່ການປະຕິບັດ ເພື່ອເຮັດໃຫ້ປະເທດ ທີ່ຫນຸ່ມນ້ອຍ ແລະ ປ່ຽນແປງຢ່າງໄວວາແຫ່ງນ ຫລຸດພົ້ນອອກຈາກຄວາມທຸກຍາກ ແລະ ຂໍ້ຈຳກັດຕ່າງໆ. ແລະ ໂດຍການປະຕິບັດເຊັ່ນນີ້, ພວກເຮົາຈະສາມາດຊ່ວຍເຮັດໃຫ້ຄວາມ ປາດຖະໜາຂອງລັດຖະບານທີ່ຈະຫລຸດພົ້ນອອກຈາກ ປະເທດດ້ອຍພັດທະນາ ກ່ອນປີ 2020 ປະກົດຜົນເປັນຈິງ.

ຮຽນບັນດາທ່ານແຂກຜູ້ມີກຽດ, ທ່ານຍິງ ແລະ ທ່ານຊາຍ,

ສຸດທ້າຍນີ້, ຂ້າພະເຈົ້າຂໍສະແດງຄວາມຂອບໃຈໝົດທຸກທ່ານອີກຄັ້ງໜຶ່ງ ທີ່ໄດ້ມາ ຮ່ວມໃນ ພິທີອັນສຳຄັນຂອງ ພວກເຮົາໃນຕອນເຊົ້າມື້ນີ້.
ຂໍສະແດງຄວາມຂອບໃຈຕໍ່ບັນດາຄູ່ຮ່ວມງານ ຂອງພວກ ເຮົາ ທັງຫມົດ ປາສະຈາກການຊ່ວຍເຫລືອຂອງພວກທ່ານ ວຽກງານຂອງ ພວກ ເຮົາ ຈະບໍ່ສາມາດ ຈັດຕັ້ງປະຕິບັດໄດ້ ແລະ ຂໍຂອບໃຈຕໍ່ລັດຖະບານ ລາວທີ່ເຮັດ ໃຫ້ວຽກງານ ນີ້ລຸລ່ວງໄປດ້ວຍດີ.